ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ: 0156 /ພບ

ນະຄອນຫຼວງວຽງຈັນ, ວັນທີ: 10 FEB 2020

# ແຈ້ງການ

**ເຖິງ** : ບັນດາສໍານັກງານ, ອົງການ, ບໍລິສັດ, ຫົວໜ່ວຍການຜະລິດ ແລະ ຜູ້ຊົມໃຊ້ໄຟຟ້າທົ່ວໄປໃນສັງຄົມ.

**ເລື່ອງ** : ຂໍຄວາມຮ່ວມມືໃນການປະຢັດພະລັງງານໄຟຟ້າ ໃນຊ່ວງເວລາທີ່ມີຄວາມຕ້ອງການພະລັງງານໄຟຟ້າຈໍານວນຫຼາຍ ( Peak Load ) ຂອງແຕ່ລະວັນ ເລີ່ມແຕ່ເວລາ 13:00 ໂມງ ເຖິງ ເວລາ 23:00 ໂມງ ນັບແຕ່ຕົ້ນເດືອນ ມີນາ (03) ໄປຮອດທ້າຍເດືອນ ມິຖຸນາ (06) ປີ 2020.

ກະຊວງພະລັງງານ ແລະ ບໍ່ແຮ່ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ, ບັນດາສໍານັກງານ, ອົງການ, ບໍລິສັດ, ຫ້າງຮ້ານ, ໂຮງຈັກ-ໂຮງງານ, ຫົວໜ່ວຍການຜະລິດ, ຫົວໜ່ວຍການບໍລິການ, ໂຄງການຊົນລະປະທານ, ໂຄງການກໍ່ສ້າງຕ່າງໆ ແລະ ມາຍັງຜູ້ຊົມໃຊ້ໄຟຟ້າທົ່ວໄປໃນສັງຄົມ ຊາບທົ່ວເຖິງກັນວ່າ:

ມາເຖິງເວລານີ້ ພັກ-ລັດ ໄດ້ທຸ່ມເທກໍາລັງແຮງຢ່າງຫຼວງຫຼາຍ ເພື່ອພັດທະນາລະບົບພະລັງງານໄຟຟ້າໃຫ້ຂະຫຍາຍຕົວດ້ວຍຈັງຫວະໄວທີ່ສຸດ ຈົນສາມາດເຮັດໃຫ້ ຄອບຄົວຂອງ ພໍ່ - ແມ່ ປະຊາຊົນ, ບັນດາສໍານັກງານ, ໂຮງຈັກ - ໂຮງງານ ຫຼື ກິດຈະການຕ່າງໆ ໃນຂອບເຂດທົ່ວປະເທດໄດ້ມີໄຟຟ້າໃຊ້ກວມເຖິງ 95% ຂອງຈໍານວນຄອບຄົວໃນທົ່ວປະເທດ ໄດ້ຊົມໃຊ້ພະລັງງານໄຟຟ້າໄດ້ຢ່າງມີປະສິດທິພາບໃນລະດັບດີສົມຄວນ.

ແຕ່ໃນສະພາບຕົວຈິງຂອງປີ 2020 ນີ້ ເປັນປີທີ່ແຫ້ງແລ້ງ ເນື່ອງຈາກໃນຊ່ວງລະດູຝົນປີ 2019 ມີປະລິມານນໍ້າຝົນໄຫຼເຂົ້າອ່າງໜ້ອຍ ສະເລ່ຍມີພຽງແຕ່ 50% ທຽບກັບແຜນ ເຮັດໃຫ້ຄວາມສາມາດໃນການຜະລິດພະລັງງານໄຟຟ້າໃນປີ 2020 ຫຼຸດລົງ, ພ້ອມດຽວກັນນັ້ນການແລກປ່ຽນ ຊື້-ຂາຍ ໄຟຟ້າເຂົ້າມາຈາກປະເທດໃກ້ຄຽງກໍ່ມີຄວາມສາມາດຈໍາກັດເຊັ່ນດຽວກັນ ທັງຍັງມີລາຄາແພງອີກດ້ວຍ, ເປັນຕົ້ນແມ່ນໃນຊ່ວງເວລາທີ່ມີຄວາມຕ້ອງການໃຊ້ໄຟຟ້າຈໍານວນຫຼາຍ ( Peak Load ).

ໃນປີ 2020 ນີ້ ລັດວິສາຫະກິດໄຟຟ້າລາວ ໄດ້ພະຍາກອນວ່າ: ໃນຊ່ວງເວລາ 13:00 ໂມງ ຫາ 23:00 ໂມງ ຂອງແຕ່ລະວັນ ໃນຊ່ວງເດືອນ ມີນາ (03) ຫາ ເດືອນມິຖຸນາ (06) ປີ 2020 ແມ່ນມີຄວາມສ່ຽງຫຼາຍທີ່ອາດຈະມີກໍລະນີໄຟຕົກ, ໄຟມອດ ຫຼື ອາດຈະສະໜອງໄຟຟ້າໄດ້ບໍ່ດີເທົ່າທີ່ຄວນ ທີ່ອາດຈະສ້າງຄວາມລໍາຄານ ຫຼື ສ້າງຄວາມເສຍຫາຍແກ່ຜູ້ຊົມໃຊ້ໄຟຟ້າທຸກປະເພດໃນບາງບໍລິເວນ.

ເພື່ອເປັນການປ້ອງກັນເຫດການ ຫຼື ເປັນການແກ້ໄຂສະພາບການດັ່ງກ່າວ, ກະຊວງພະລັງງານ ແລະ ບໍ່ແຮ່ ຂໍຮຽນສະເໜີຂໍຄວາມຮ່ວມມືຈາກທຸກພາກສ່ວນ ຈົ່ງປະຢັດ, ຈໍາກັດ ຫຼື ຫຼຸດຜ່ອນການຊົມໃຊ້ໄຟຟ້າ ໃນຊ່ວງເວລາ 13:00ໂມງ ຫາ 23:00 ໂມງ ຂອງແຕ່ລະວັນ ໃນເດືອນ ມີນາ (03) ຫາ ເດືອນ ມິຖຸນາ (06) ປີ 2020 ໃຫ້ໄດ້ຫຼາຍເທົ່າທີ່ຈະຫລາຍໄດ້. ຖ້າຈໍາເປັນ ແລະ ຄວາມສາມາດເຮັດໄດ້ ກະລຸນາເລື່ອນເວລາໃຊ້ໄຟຟ້າຂອງທ່ານອອກຈາກຊ່ວງເວລາທີ່ມີຄວາມຕ້ອງການໃຊ້ໄຟຟ້າຈໍານວນຫຼາຍ (Peak Load) ຄືແຕ່ 13:00 ໂມງ ເຖິງ 23:00 ໂມງ ນັບແຕ່ຕົ້ນເດືອນ ມີນາ (03) ໄປຮອດທ້າຍເດືອນ ມິຖຸນາ (06) ປີ 2020 ທີ່ກ່າວມານີ້ໄປເຖິງຊ່ວງເວລາອື່ນໆຂອງແຕ່ລະມື້.

ໃນລາຍລະອຽດນັ້ນ ເພື່ອເປັນການປະຢັດ, ເພື່ອຄວາມປອດໄພ ແລະ ເພື່ອແກ້ໄຂສະພາບການດັ່ງກ່າວ, ກະຊວງພະລັງງານ ແລະ ບໍ່ແຮ່ ຂໍຮຽກຮ້ອງມາຍັງບັນດາທ່ານ ຈົ່ງໃຫ້ຄວາມຮ່ວມມືປະຕິບັດດັ່ງນີ້:

- ສໍາລັບໂຮງຈັກໂຮງງານຂະໜາດໃຫຍ່ ໂດຍສະເພາະໂຮງງານທີ່ຕັ້ງຢູ່ໃນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ຂໍໃຫ້ຫຼຸດຜ່ອນການນໍາໃຊ້ໄຟຟ້າໃນຊ່ວງທີ່ມີຄວາມຕ້ອງການໃຊ້ໄຟຟ້າຈໍານວນຫຼາຍ (Peak Load) ລົງຢ່າງໜ້ອຍ 50% ຂອງການນໍາໃຊ້ປົກກະຕິ.
- ສໍາລັບຫົວໜ່ວຍການຜະລິດ ອຸດສາຫະກໍາ-ຫັດຖະກໍາ, ການບໍລິການ ແລະ ກິດຈະການກໍ່ສ້າງທົ່ວໄປ ໃນຂອບເຂດທົ່ວປະເທດ ຂໍໃຫ້ຊ່ວຍເປັນເຈົ້າການກໍາກັບການນໍາໃຊ້ພະລັງງານໄຟຟ້າໃຫ້ຢູ່ໃນລະດັບທີ່ຈໍາເປັນຕໍ່າສຸດ, ຫຼີກເວັ້ນກິດຈະກໍາ ຫຼື ການນໍາໃຊ້ອຸປະກອນໄຟຟ້າທີ່ກິນໄຟຫຼາຍໃນຊ່ວງທີ່ມີຄວາມຕ້ອງການໃຊ້ໄຟຟ້າຈໍານວນຫຼາຍ ( Peak Load ).
- ສໍາລັບບັນດາໂປ້ມນໍ້າຮັບໃຊ້ຊົນລະປະທານ ຂໍໃຫ້ຫຼີກເວັ້ນການໂປ້ມນໍ້າໃນຊ່ວງທີ່ມີຄວາມຕ້ອງການໃຊ້ໄຟຟ້າຈໍານວນຫຼາຍ ( Peak Load ) ຢ່າງສິ້ນເຊີງ. ຂໍໃຫ້ແລ່ນຈັກໂປ່ມນໍ້ານອກໂມງ Peak Load ທີ່ກ່າວມາ.
- ຂໍໃຫ້ປິດໄຟ ແລະ ຖອດປັກສຽບເຄື່ອງໃຊ້ໄຟຟ້າທຸກຊະນິດ ເຊັ່ນ: ໝໍ້ຕົ້ມນໍ້າ, ໝໍ້ຫຸງເຂົ້າ, ເຕົາລີດ, ໂທລະພາບ, ພັດລົມ ແລະ ອື່ນໆ ທຸກຄັ້ງເມື່ອບໍ່ມີຄວາມຈໍາເປັນນໍາໃຊ້.
- ຄວນປັບອຸນຫະພູມແອເຢັນໃນລະດັບ 26-27 ອົງສາ ແລະ ປິດແອ ກ່ອນອອກຈາກຫ້ອງປະມານ 30 ນາທີທຸກຄັ້ງ.
- ຄວນປັບລະບົບຄວບຄຸມຄວາມເຢັນຂອງຕູ້ເຢັນ ໃຫ້ຢູ່ໃນລະດັບປະຢັດພະລັງງານ ( ບໍ່ໃຫ້ເຢັນເກີນຄວາມຈໍາເປັນ ).
- ຄວນຕິດຕັ້ງຕູ້ເຢັນໃຫ້ຢູ່ຫ່າງຈາກຝາເຮືອນຢ່າງໜ້ອຍບໍ່ໃຫ້ຫຼຸດ 15 ຊັງຕີແມັດ.
- ໝັ່ນກວດກາ, ລະລາຍນໍ້າກ້ອນໃນຕູ້ເຢັນ ແລະ ອະນາໄມຕູ້ເຢັນໃຫ້ສະອາດຢູ່ສະເໝີ.
- ເລືອກໃຊ້ອຸປະກອນໄຟຟ້າປະຢັດພະລັງງານ ລວມທັງດອກໄຟຟ້າປະຢັດ.
- ເປີດຜ້າກັ້ງ, ປ່ອງຢ້ຽມ ເພື່ອຮັບເອົາແສງສະຫວ່າງຈາກທໍາມະຊາດ ແທນການເປີດໄຟສະຫວ່າງ.
- ໃຫ້ເອົາໃຈໃສ່ກວດກາ ສະພາບສາຍໄຟຟ້າ, ສະວິກໄຟ, ປັກສຽບ, ຈຸດເຊື່ອມຕໍ່ ແລະ ອຸປະກອນໄຟຟ້າຕ່າງໆໃຫ້ຢູ່ໃນສະພາບດີ, ຖ້າເຫັນວ່າມີອຸປະກອນໃດມີຄວາມຜິດປົກກະຕິ ໃຫ້ຮີບຮ້ອນຕິດຕໍ່ຊ່າງໄຟຟ້າມືອາຊີບມາສ້ອມແປງ, ຫ້າມເດັດຂາດບໍ່ໃຫ້ຜູ້ທີ່ບໍ່ມີວິຊາສະເພາະ ຫຼື ບໍ່ມີຄວາມຮູ້ດ້ານໄຟຟ້າດໍາເນີນການສ້ອມ ແປງເອງ ເພື່ອຫຼີກເວັ້ນອຸປະຕິເຫດ, ຄວາມເສຍຫາຍຕໍ່ຊີວິດ, ຊັບສິນຂອງຜູ້ຊົມໃຊ້ເອງ ແລະ ລະບົບໄຟຟ້າໃນວົງກ້ວາງ.

ມາດຕະການກ່າວມາຂ້າງເທິງນີ້ ເປັນມາດຕະການທີ່ຄວນກະທໍາຕະຫຼອດປີ ແລະ ເລື້ອຍໆໄປ ເພື່ອຄວາມປອດໄພ ພ້ອມທັງເປັນການປະຢັດຕໍ່ທ່ານເອງ ແລະ ສັງຄົມ, ແຕ່ໃນຊ່ວງເວລາທີ່ກ່າວຂອງປີນີ້ ແມ່ນມີຄວາມຈໍາເປັນທີ່ຂາດບໍ່ໄດ້ ເພື່ອໃຫ້ ລັດວິສາຫະກິດໄຟຟ້າລາວ ສາມາດສະໜອງໄຟຟ້າໄດ້ຢ່າງປົກກະຕິ.

ກະຊວງພະລັງງານ ແລະ ບໍ່ແຮ່ ເຊື່ອໝັ້ນວ່າ ຖ້າແຕ່ລະພາກສ່ວນໄດ້ຮັບຮູ້ຕໍ່ຄວາມຈໍາເປັນ ແລະ ໄດ້ປະກອບສ່ວນຢ່າງເປັນເຈົ້າການໃນການຊົມໃຊ້ພະລັງງານໄຟຟ້າຢ່າງປະຢັດ ແລະ ຖືກຕາມຄໍາຮຽກຮ້ອງ ທີ່ໄດ້ແຈ້ງການແນະນໍາມານີ້ ພວກເຮົາຈະຜ່ານຜ່າຊ່ວງໄລຍະທີ່ກ່າວຂ້າງເທິງໃນປີນີ້ໄດ້ຢ່າງແນ່ນອນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທຸກພາກສ່ວນໃນທົ່ວສັງຄົມ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີ.

ລັດຖະມົນຕີ

ດຣ.ຄໍາມະນີ ອິນທິລາດ